# ອະນຸສັນຍາ 01
# ການກຳນົດເສັ້ນທາງການຂົນສົ່ງລະຫວ່າງປະເທດ, ຈຸດເຂົ້າ ແລະ ຈຸດອອກປະເທດ

**ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາ ທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນ ຂ້າມແດນ (ຕໍ່ໄປນີ້ເອີ້ນວ່າ: "ເອກະສານຊ້ອນທ້າຍ");**

ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະ ຊາທິປະໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິ ຍົມ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ: "ລັດພາຄີ");

ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລັດ ຖະບານແຫ່ງລາຊະອານາຈັກ ໄທ ແລະ ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອ ການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນຂ້າມແດນ ຊຶ່ງໄດ້ລົງນາມຄັ້ງທຳອິດໃນວັນທີ 26 ພະຈິກ 1999 ທີ່ ນະຄອນຫຼວງວຽງຈັນ ແລະ ມີການດັດແກ້ເພີ່ມເຕີມໃນວັນທີ 29 ພະຈິກ 2001 ທີ່ ນະ ຄອນຫຼວງຢາງກຸ້ງ, ເຊິ່ງລາຊະອານາຈັກ ກຳປູເຈຍ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 29 ພະຈິກ 2001 ທີ່ ນະຄອນຫຼວງຢາງກຸ້ງ, ສາທາລະນະລັດ ປະຊາຊົນ ຈີນ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 03 ພະຈິກ 2002 ທີ່ ພະນົມເປນ ແລະ ສະຫະພາບ ມຽນມາ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 19 ກັນຍາ 2003 ທີ່ ເມືອງຕາລີ (ຕໍ່ໄປນີ້ເອີ້ນວ່າ: "ສັນຍາ");

ອີງຕາມມາດຕາ 03 (ຂ) ແລະ (ບ) ຂອງສັນຍາ ຊຶ່ງມີຜົນຕໍ່ເອກະສານຊ້ອນທ້າຍ ແລະ ອະນຸສັນ ຍາ ຕ້ອງກຳນົດລາຍລະອຽດທາງດ້ານເຕັກນິກ ຫຼື ເວລາ ແລະ/ຫຼື ສະຖານທີສະເພາະ ແລະ ໃຫ້ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຖືເປັນສ່ວນໜຶ່ງຂອງສັນຍາ ແລະ ມີຜົນບັງຄັບໃຊ້ເທົ່າທຽມກັນ;

ອີງຕາມມາດຕາ 36 ຂອງສັນຍາທີ່ມີການດັດແກ້, ການລົງນາມ ແລະ ການໃຫ້ສັດຕະຍາບັນ ຫຼື ການຮັບຮອງ ແລະ ການມີຜົນບັງຄັບໃຊ້ຂອງສັນຍາ ອາດຈຳແນກອອກຈາກເອກະສານຊ້ອນທ້າຍ ແລະ ອະ ນຸສັນຍາ;

ອີງຕາມກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ 6 ປະເທດ ຄັ້ງທີ 9 ທີ່ມະນີລາ ໃນເດືອນ ມັງກອນ 2000, ກອງປະຊຸມການຂົນສົ່ງພາຍໃຕ້ການຮ່ວມມືໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ ຄັ້ງ 7 ທີ່ ໂຮຈິມິນ ໃນເດືອນ ສິງຫາ 2002 ແລະ ກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນ ລຸ່ມແມ່ນ້ຳຂອງ 6 ປະເທດ

ຄັ້ງທີ 11 ທີ່ ພະນົມເປນ ໃນເດືອນ ກັນຍາ 2002 ຊຶ່ງລັດຖະບານຂອງລັດພາຄີ ໄດ້ຕົກລົງເຫັນດີຕໍ່ແຜນງານການສ້າງສັນຍາ ແລະ ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຄັດຕິດສັນຍາສະບັບນີ້ໃຫ້ສຳເລັດໃນປີ 2005; ແລະ

ອີງຕາມມາດຕາ 06, 20, ແລະ 25 ຂອງສັນຍາສະບັບນີ້ ຊຶ່ງກຳນົດໃຫ້ມີອະນຸສັນຍານີ້ເພື່ອກຳນົດ ລາຍລະອຽດທາງດ້ານເຕັກນິກ.

**ໄດ້ມີການຕົກລົງ ດັ່ງຕໍ່ໄປນີ້:**

## ມາດຕາ 01: ເສັ້ນທາງການຂົນສົ່ງລະຫວ່າງປະເທດ ແລະ ຈຸດຂ້າມແດນ.

ເສັ້ນທາງການຂົນສົ່ງລະຫວ່າງປະເທດ ແລະ ຈຸດຂ້າມແດນທີ່ມີຢູ່ໃນສັນຍານີ້ ໄດ້ກຳນົດໄວ້ໃນເອກະ ສານຄັດຕິດຂອງອະນຸສັນຍາສະບັບນີ້ຄື: "ບັນຊີລາຍຊື່ເສັ້ນທາງການຂົນສົ່ງລະຫວ່າງປະເທດ ແລະ ຈຸດຂ້າມ ແດນທີ່ກຳນົດ ແລະ ແຜນທີທີ່ກ່ຽວຂ້ອງ" (ຂະໜາດ A4).

## ມາດຕາ 02: ການເປີດຈຸດຂ້າມແດນ ແລະ ເສັ້ນທາງການຂົນສົ່ງລະຫວ່າງປະເທດ ເພີ່ມເຕີມ.

ນອກເໜືອຈາກຈຸດຂ້າມແດນ ແລະ ເສັ້ນທາງທີ່ໄດ້ກຳນົດໄວ້ໃນອະນຸສັນຍານີ້ແຕ່ເບື້ອງຕົ້ນແລ້ວ, ກຸ່ມປະເທດລັດພາຄີ ມີສິດທີ່ຈະເປີດຈຸດຂ້າມແດນ ແລະ ເສັ້ນທາງການຂົນສົ່ງລະຫວ່າງປະເທດເພີ່ມໄດ້ໂດຍ ສ້າງບົດບັນທຶກຄວາມເຂົ້າໃຈລະຫວ່າງກັນ. ຈຸດຂ້າມແດນ ແລະ ເສັ້ນທາງການຂົນສົ່ງລະຫວ່າງປະເທດທີ່ກຳ ນົດເພີ່ມເຕີມນັ້ນຈະມີສະຖານະເທົ່າກັບຈຸດຂ້າມແດນ ແລະ ເສັ້ນທາງຂົນສົ່ງລະຫວ່າງປະເທດທີ່ກຳນົດໄວ້ແຕ່ເບື້ອງຕົ້ນ, ສ່ວນທີ່ເປີດເພີ່ມນີ້ຈະຕ້ອງແຈ້ງໃຫ້ຄະນະກຳມະການຮ່ວມຮັບຮູ້ໃນທັນທີ ແລະ ຈັດລວມໄວ້ໃນ ມາດຕາ 01 ຂອງອະນາສັນຍານີ້ ໂດຍການດັດແກ້. ເຖິງຢ່າງໃດກໍ່ຕາມ, ຈຸດຂ້າມແດນເພີ່ມເຕີມອາດໄດ້ຮັບ ການເປີດກ່ອນການໃຫ້ສັດຕະຍາບັນ ຫຼື ການຍອມຮັບການດັດແກ້ນັ້ນ ຫາກຈຸດນັ້ນມີຄຸນສົມບັດເປັນທີ່ໜ້າ ພໍໃຈຄືກັນກັບຈຸດຂ້າມແດນທີ່ກຳນົດໄວ້ຄັ້ງທຳອິດ.

## ມາດຕາ 03: ການດັດແກ້.

ລັດພາຄີໃດໜຶ່ງ ສາມາດສະເໜີໃຫ້ມີການດັດແກ້ອະນຸສັນຍາໄດ້ ໂດຍຜ່ານຄະນະກຳມະການ ຮ່ວມ, ການດັດແກ້ດັ່ງກ່າວຈະຕ້ອງຜ່ານການເຫັນດີເປັນເອກະພາບຈາກທຸກລັດພາຄີ.

## ມາດຕາ 04: ການໃຫ້ສັດຕະຍາບັນ ຫຼື ການຍອມຮັບ.

ອະນຸສັນຍາ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຫຼື ຍອມຮັບຈາກລັດຖະບານຂອງລັດພາຄີ. ມາດ ຕານີ້ແມ່ນຍັງໃຊ້ກັບກໍລະນີທີ່ມີການດັດແກ້ອະນຸສັນຍາເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

**ມາດຕາ 05: ຜົນບັງຄັບໃຊ້.**

ອະນຸສັນຍາ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ ທີ່ລັດພາຄີຢ່າງນ້ອຍ 2 ປະເທດ ໄດ້ໃຫ້ສັດ ຕະຍາບັນ ຫຼື ຍອມຮັບ ແລະ ຈະມີຜົນກັບສະເພາະປະເທດທີ່ໃຫ້ສັດຕະຍາບັນແລ້ວເທົ່ານັ້ນ. ມາດຕານີ້ແມ່ນ ຍັງໃຊ້ກັບກໍລະນີທີ່ມີການດັດແກ້ອະນຸສັນຍາເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

**ມາດຕາ 06: ການປັບປຸງກົດໝາຍພາຍໃນປະເທດ.**

ໃນກໍລະນີທີ່ຈຳເປັນ, ລັດພາຄີ ຕ້ອງໄດ້ດຳເນີນການປັບປຸງກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບເນື້ອໃນອະນຸສັນຍານີ້.

**ມາດຕາ 07: ຂໍ້ສະຫງວນ.**

ບໍ່ອະນຸຍາດໃຫ້ມີການຕັ້ງຂໍ້ສະຫງວນຕໍ່ອະນຸສັນຍານີ້.

**ມາດຕາ 08: ການຢຸດຕິການນຳໃຊ້ອະນຸສັນຍາ.**

ລັດພາຄີແຕ່ລະປະເທດ ສາມາດຈະຢຸດຕິການນຳໃຊ້ອະນຸສັນຍາຊົ່ວຄາວ ທັງໝົດ ຫຼື ບາງສ່ວນໂດຍທັນທີເມື່ອມີກໍລະນີສຸກເສີນທີ່ມີຜົນກະທົບຕໍ່ຄວາມປອດໄພພາຍໃນປະເທດ. ລັດພາຄີ ຈະຕ້ອງແຈ້ງຕໍ່ລັດພາ ຄີອື່ນຮັບຮູ້ໂດຍໄວທີ່ສຸດກ່ຽວກັບການຢຸດຕິການນຳໃຊ້ອະນຸສັນຍາ ແລະ ຈະສິ້ນສຸດລົງທັນທີທີ່ເຫດການກັບ ສູ່ສະພາວະປົກກະຕິ.

**ມາດຕາ 09: ການພົວພັນກັບສັນຍາ.**

ໃນຖານະທີ່ເປັນມາດຕະການໃນການດຳເນີນການຕາມຫຼັກການທີ່ກຳນົດໄວ້ໃນສັນຍາ, ອະນຸສັນຍາ ຈະຕ້ອງບໍ່ມີການບິດເບືອນ ຫຼື ຂັດຕໍ່ຫຼັກການດັ່ງກ່າວ. ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ອະນຸສັນຍາ ແລະ ສັນຍາ ແມ່ນໃຫ້ຖືເອົາສັນຍາເປັນຫຼັກ ແລະ ໃນກໍລະນີທີ່ມີຂໍ້ຄັດແຍ່ງ ລະຫວ່າງ ອະນຸສັນຍານີ້ກັບອະນຸສັນ ຍາອື່ນ ຫຼື ເອກະສານຊ້ອນທ້າຍ ໃຫ້ຕີຄວາມໝາຍໂດຍອາໄສສັນຍາເປັນຫຼັກ.

**ມາດຕາ 10: ການພົວພັນຂອງເອກະສານຄັດຕິດກັບອະນຸສັນຍາ.**

ເອກະສານຄັດຕິດຖືເປັນສ່ວນໜຶ່ງຂອງອະນຸສັນຍາ ແລະ ມີຜົນສັດສິດເທົ່າທຽມກັນ.

**ມາດຕາ 11: ການແກ້ໄຂຂໍ້ຂັດແຍ່ງ.**

ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການຕີຄວາມໝາຍ ຫຼື ການນຳໃຊ້ອະນຸສັນສະບັບນີ້ ລະຫວ່າງລັດ ພາຄີ ນັບແຕ່ 2 ປະເທດ ຫຼື ຫຼາຍກວ່ານັ້ນ ຈະຖືກແກ້ໄຂໂດຍກົງ ຫຼື ໂດຍຜ່ານການເຈລະຈາຢ່າງສັນຕິວິທີໃນຄະນະກຳມະການຮ່ວມກັນ.

## ມາດຕາ 12: ການຍົກເລີກ.

ເມື່ອອະນຸສັນຍາມີຜົນບັງຄັບໃຊ້ແລ້ວ, ອະນຸສັນຍານີ້ບໍ່ສາມາດຖືກຍົກເລີກແຍກຕ່າງຫາກຈາກສັນ ຍາໄດ້.

ເອກະສານຄັດຕິດ: ບັນຊີລາຍຊື່ເສັ້ນທາງການຂົນສົ່ງລະຫວ່າງປະເທດ ແລະ ຈຸດຂ້າມແດນທີ່ກຳນົດ ແລະ ແຜນທີທີ່ກ່ຽວຂ້ອງ (ຂະໜາດ A4).

ເພື່ອເປັນພະຍານຕໍ່ເອກະສານນີ້, ຜູ້ລົງນາມຂ້າງລຸ່ມນີ້ ແມ່ນໄດ້ຮັບມອບສິດຢ່າງຖືກຕ້ອງໃນການລົງ ນາມໃນອະນຸສັນຍານີ້.

ລົງນາມ ທີ່ ພະນົມເປນ, ວັນທີ 30 ເມສາ 2004 ໂດຍເປັນພາສາອັງກິດ ຊຶ່ງມີຕົ້ນສະບັບຈຳນວນ 06 ສະບັບ.

**ລົງນາມ ໂດຍ:**

ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ

ພະນະທ່ານ Tram Iv Tek

ລັດຖະມົນຕີຊ່ວຍວ່າການກະຊວງໂຍທາທິການແລະ ຂົນສົ່ງ

ລັດຖະບານແຫ່ງສາທາລະນະລັດ ປະຊາຊົນ ຈີນ

ພະນະທ່ານ Hu Xijie

ລັດຖະມົນຕີຊ່ວຍວ່າການກະຊວງການສື່ສານ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພະນະທ່ານ ສົມມາດ ພົນເສນາ

ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ, ຂົນສົ່ງ, ໄປະສະນີ ແລະ ກໍ່ສ້າງ

ລັດຖະບານແຫ່ງສະຫະພາບ ມຽນມາ

ພະນະທ່ານ Thura Thaung Lwin

ລັດຖະມົນຕີຊ່ວຍວ່າການກະຊວງຂົນສົ່ງທາງລົດໄຟ

ລັດຖະບານແຫ່ງລາຊະອານາຈັກ ໄທ

ພະນະທ່ານ Nikorn Chamnong

ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ

ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ພະນະທ່ານ Pham The Minh

ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ

## ເອກະສານຄັດຕິດ
## ບັນຊີລາຍຊື່ເສັ້ນທາງການຂົນສົ່ງລະຫວ່າງປະເທດ ແລະ ຈຸດຂ້າມແດນ

ເອກະສານຄັດຕິດນີ້ ສາມາດຊອກໄດ້ຈາກສັນຍາຂອງທະນາຄານພັດທະນາອາຊີ ວ່າດ້ວຍການອໍາ ນວຍຄວາມສະດວກໃນການຂົນສົ່ງຜ່ານແດນໃນຂອບອະນຸພາກພື້ນລຸ່ມແມ່ນໍ້າຂອງທີ່ເວັບໄຊ: www.adb.org/GMS/Cross-Border/default.asp. ໃນນີ້, ເອກະສານນີ້ ແມ່ນບໍ່ໄດ້ຖືກນໍາມາປະກອບໃນນີ້ ເພາະດ້ານເນື້ອໃນ ແລະ/ຫຼື ເຕັກນິກ ແມ່ນມີຄວາມສັບສົນ.